# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ........... ໜ້າ 01-05

II. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ................................................ ໜ້າ 06-08

III. ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນ ຄຕພ................................ໜ້າ 09-11


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ທັນວາ 2022**


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la

# I. ສະພາບການພົ້ນເດັ່ນຂອງ ບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 9/12/2022, ທ່ານ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ ໄດ້ຕ້ອນຮັບ ທ່ານ Gerard Larcher, ປະທານລັດຖະສະພາຝຣັ່ງ. ທ່ານ ຫງວຽນ ຟູຈ້ອງ ໄດ້ຕີລາຄາສູງ ຕໍ່ການຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ ຂອງ ທ່ານ Gerard Larcher ໃນຄັ້ງນີ້, ຊຶ່ງເປັນຂີດໝາຍສຳຄັນ ຂອງການພົວພັນຂອງສອງຝ່າຍ. ທ່ານ Gerard Larcher ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງການພົວພັນ ສອງຊາດໃນການຮ່ວມມືທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ແລະ ອື່ນໆ; ການຢ້ຽມຢາມ ສສ ຫວຽດນາມ ຄັ້ງນີ້ ແມ່ນເພື່ອກະກຽມໃຫ້ແກ່ການສະເຫຼີມສະຫຼອງສາຍພົວພັນການທູດຂອງສອງປະເທດ ຄົບຮອບ 50 ປີ ແລະ ການພົວພັນຮ່ວມມືຍຸດທະສາດ ຄົບຮອບ 10 ປີ ໃນປີ 2023.

ວັນທີ 20/12/2022, ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ ໄດ້ເຂົ້າຮ່ວມກອງປະຊຸມກອງທັບການເມືອງລະດັບຊາດ ເພື່ອສະຫຼຸບການເຄື່ອນໄຫວວຽກງານໃນປີ 2022 ແລະ ວາງທິດທາງແຜນການໃນຕໍ່ໜ້າ, ຊຶ່ງ ສະຫາຍ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຜົນສຳເລັດຂອງກະຊວງ ປ້ອງກັນປະເທດໃນການປົກປ້ອງນ່ານຟ້າ, ທະເລ ແລະ ເຂດຊາຍແດນ ຕະຫຼອດ 1 ປີ ຜ່ານມາ; ໄດ້ເນັ້ນໜັກໃຫ້ກຳລັງ ປ້ອງກັນປະເທດ ສ້າງກຳລັງທີ່ມີຄວາມເຂັ້ມແຂງດ້ານການເມືອງ, ຈົງຮັກພັກດີຕໍ່ປະເທດຊາດ ແລະ ປະຊາຊົນ; ປັບປຸງ ຄວາມສາມາດໃນການຄາດຄະເນເຫດການ, ກຽມພ້ອມຮັບມືກັບທຸກສະຖານະການທີ່ຈະເກີດຂຶ້ນ ຢ່າງມີປະສິດທິພາບ.

ວັນທີ 20 ທັນວາ 2022, ກອງປະຊຸມຄະນະກຳມະການລະດັບຊາດ ລະຫວ່າງລັດຖະບານ ຫວຽດນາມ ແລະ ກູບາ ຄັ້ງທີ 40 ໄດ້ຈັດຂຶ້ນ ຜ່ານວີດີໂອທາງໄກ, ຊຶ່ງ ລັດຖະມົນຕີກະຊວງການຄ້າ ແລະ ການລົງທຶນຕ່າງປະເທດກູບາ ໄດ້ກ່າວວ່າ ເຖິງແມ່ນວ່າ ກູບາ ຈະພົບຄວາມຫຍຸ້ງຍາກຈາກການຂວ້ຳບາດຂອງຕາເວັນຕົກ ແລະ ການລະບາດຂອງ ພະຍາດໂຄວິດ-19, ແຕ່ ກູບາ ແລະ ຫວຽດນາມ ໄດ້ອຳນວຍຄວາມສະດວກໃນການຮ່ວມມືເຊິ່ງກັນ ແລະ ກັນ ລວມ ທັງດ້ານສາທາລະນະສຸກ, ການຄ້າ, ການລົງທຶນ, ການສຶກສາ, ການຝຶກອົບຮົມດ້ານວິທະຍາສາດ ແລະ ເຕັກໂນໂລຊີ ແລະວ່າ ໃນປີ 2023 ກູບາ ໄດ້ກຳນົດເປົ້າໝາຍ ສ້າງສະຖຽນລະພາບດ້ານເສດຖະກິດມະຫາພາກ, ຟື້ນຟູການຜະລິດ ໄຟຟ້າ, ສົ່ງເສີມການໃຊ້ພະລັງງານໝູນວຽນ, ການເພີ່ມການຜະລິດສະບຽງອາຫານ ແລະ ຟື້ນຟູການທ່ອງທ່ຽວ. ສ່ວນ ລັດຖະມົນຕີກະຊວງການກໍ່ສ້າງຫວຽດນາມ ໄດ້ກ່າວວ່າ ສາຍພົວພັນ ຫວຽດນາມ ແລະ ກູບາ ນັບມື້ນັບເພີ່ມທະວີທາງ ດ້ານການເມືອງ ແລະ ການພົບປະຂອງຜູ້ນຳຂັ້ນສູງຂອງສອງປະເທດ. ສອງຝ່າຍ ເຫັນດີຍົກລະດັບການຮ່ວມມື ດ້ານ ການຄ້າ, ການລົງທຶນ, ກະສິກຳ, ການປະມົງ, ສາທາລະນະສຸກ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ອື່ນໆ.

### 2). ພັກກອມມູນິດຈີນ

ວັນທີ 7-10/12/2022, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ເດີນທາງຢ້ຽມຢາມທາງລັດຖະກິດ ອາຣັບບີ ຊາອຸດິດ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດຈີນ-ອາຣັບ ແລະ ກອງປະຊຸມສຸດຍອດສະພາການຮ່ວມມືຈີນ-ອາຣັບ, ໄດ້ພົບປະກັບກະສັດ Salman, ເຈົ້າຊາຍ Faisal bin Bandar Al Saud, ລັດຖະມົນຕີຕ່າງປະເທດ. ສອງຝ່າຍໄດ້ປຶກສາຫາລືກັນໃນຫຼາຍບັນຫາເປັນຕົ້ນການສົ່ງເສີມ ການຮ່ວມມືທາງດ້ານພະລັງງານ, ແລກປ່ຽນທັດສະນະຕໍ່ສະພາບການໃນພາກພື້ນ ແລະ ສາກົນ ແລະ ບັນຫາອື່ນໆ. ໃນ ກອງປະຊຸມສຸດຍອດຈີນ-ອາຣັບ ທີ່ ນະຄອນຫຼວງຣີຢັດ ວັນທີ 9/12/2022, ສະຫາຍ ສີ ຈິ້ນຜິງ ໄດ້ກ່າວຄຳປາໄສ ຊຶ່ງ ມີເນື້ອໃນບາງຕອນວ່າ ໃນຖານະເປັນຄູ່ຮ່ວມຍຸດທະສາດຈີນ-ອາຣັບ ຕ້ອງໄດ້ເພີ່ມທະວີຄວາມສາມັກຄີ ແລະ ການ ຮ່ວມມືເພື່ອສ້າງປະຊາຄົມຄູ່ຮ່ວມຊະຕາກຳຈີນ-ອາຣັບ ທີ່ແໜ້ນແຟ້ນກວ່າເກົ່າ, ເສີມສ້າງຄວາມຈະເລີນ ໃຫ້ປະຊາຊົນ ສອງຝ່າຍ, ຍຶດໝັ້ນຄວາມເປັນເອກະລາດ ແລະ ເປັນເຈົ້າຕົນເອງ, ສຸມໃສ່ການພັດທະນາເສດຖະກິດ, ເພີ່ມຄວາມໄວ້ ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ແລະ ຮັກສາສັນຕິພາບຂອງພາກພື້ນ ແລະ ສາກົນ. ໃນໂອກາດຢ້ຽມຢາມ ອາຣັບບີ ຊາ ອຸດິດ ຄັ້ງນີ້ທ່ານ ສີ ຈິ້ນຜິງ ຍັງໄດ້ເຂົ້າຮ່ວມພິທີເຊັນສັນຍາສອງຝ່າຍກັບ ອາຣັບບີ ຊາອຸດິດ ຫຼາຍສະບັບ ມີມູນຄ່າຫຼາຍ ກວ່າ 29 ຕື້ໂດລາ ທີ່ກວມເອົາພະລັງງານສະອາດ, ຄົມມະນາຄົມ, ການກໍ່ສ້າງ, ການພັດທະນາເຕັກໂນໂລຊີ ລວມທັງ ການໃຫ້ບໍລິສັດຫົວເວີຍເປັນຜູ້ພັດທະນາ ແລະ ສ້າງສູນຮຽນຮູ້ທາງດ້ານເຕັກໂນໂລຊີ ຢູ່ເມືອງໃໝ່ຂອງ ອາຣັບບີ ຊາ ອຸດິດ.

ວັນທີ 21 ທັນວາ 2022, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ ໄດ້ຕ້ອນຮັບການຢ້ຽມຢາມຂອງ ສະຫາຍ ດິມິທຣີ ເມດເວເດບ, ປະທານພັກລັດເຊຍເອກະພາບ, ຮອງປະທານສະພາຄວາມໝັ້ນຄົງລັດເຊຍ, ເປັນການຢ້ຽມຢາມຂອງຜູ້ແທນຂັ້ນສູງລັດເຊຍຄະນະທຳອິດ ທີ່ຢ້ຽມຢາມ ສປ ຈີນ ນັບແຕ່ ສະຫາຍ ສີ ຈິ້ນຜິງ ໄດ້ຮັບເລືອກຕັ້ງເປັນເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ ສະໄໝທີ 3 ແຕ່ເດືອນ ຕຸລາ 2022 ເປັນຕົ້ນມາ; ເປັນການຢ້ຳຄືນການຮ່ວມມືທີ່ແໜ້ນແຟ້ນຂອງສອງພັກ ນັບແຕ່ອະດີດ ຈົນເຖິງປັດຈຸບັນ. ສອງຝ່າຍ ໄດ້ທົບທວນຄືນການຮ່ວມມືທຸກຂົງເຂດວຽກງານ ໃນຖານະເປັນຄູ່ຮ່ວມມືຍຸດທະສາດນຳກັນ; ສອງຝ່າຍມີຄຳເຫັນຮ່ວມກັນວ່າ ການຮ່ວມມືລະຫວ່າງສອງພັກ-ລັດ ສປ ຈີນ-ລັດເຊຍ ມີສ່ວນສຳຄັນຕໍ່ການແກ້ໄຂບັນຫາຕ່າງໆຂອງໂລກ ລວມທັງບັນຫາພະລັງງານ, ສະບຽງອາຫານ ແລະ ຂໍ້ຂັດແຍ່ງຕ່າງໆ. ປຶກສາກ່ຽວກັບນະໂຍບາຍຕ່າງປະເທດ ໃນກອບສະຫະປະຊາຊາດ, ອົງການຮ່ວມມືຊຽງໄຮ ແລະ ການຮ່ວມມືຂອງກຸ່ມ BRICS ແລະ G20.

ວັນທີ 21 ທັນວາ 2022, ທ່ານ ສີ ຈິ້ນຜິງ ແລະ ທ່ານ ດາວິດ ໂຈນ ເຣີລີ, ຜູ້ສຳເລັດລາຊະການອິດສະຕຣາລີ ໄດ້ສົ່ງສານຊົມເຊີຍເຊິ່ງກັນ ແລະ ກັນ ເພື່ອສະເຫຼີມສະຫຼອງສາຍພົວພັນການທູດ ຈີນ-ອິດສະຕຣາລີ ຄົບຮອບ 50 ປີ. ເນື້ອໃນບາງຕອນ, ທ່ານສີ ຈິ້ນຜິງ ໄດ້ລະບຸວ່າ: ນັບແຕ່ຈີນ-ອິດສະຕຣາລີ ສ້າງສາຍພົວພັນທາງການທູດນຳກັນມາ, ການຮ່ວມມືຕົວຈິງໃນຂົງເຂດຕ່າງໆ ໄດ້ຮັບຜົນສຳເລັດເປັນກ້າວໆມາ, ເຊິ່ງໄດ້ນຳເອົາຄວາມຜາສຸກອັນແທ້ຈິງມາໃຫ້ແກ່ປະຊາຊົນສອງປະເທດ. ຈີນ ແລະ ອິດສະຕຣາລີ ຕ່າງກໍເປັນປະເທດສຳຄັນໃນພາກພື້ນອາຊີ-ປາຊີຟິກ; ການຮ່ວມມືທີ່ດີຂອງສອງປະເທດ ມີຜົນດີຕໍ່ການຊຸກຍູ້ສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນອາຊີ-ປາຊີຟິກ ກໍຄືຂອງໂລກ; ຍິນດີ ຊຸກຍູ້ໃຫ້ສາຍພົວພັນຄູ່ຮ່ວມຍຸດທະສາດຮອບດ້ານຈີນ-ອິດສະຕຣາລີ ພັດທະນາໄປແບບຍືນຍົງ, ສ້າງຄວາມຜາສຸກໃຫ້ແກ່ສອງຊາດ ແລະ ປະຊາຊົນສອງປະເທດຢ່າງບໍ່ຢຸດຢັ້ງ.

ວັນທີ 20 ທັນວາ 2022, ທ່ານ ສີ ຈິ້ນຜິງ ກໍໄດ້ສົນທະນາຜ່ານທາງໂທລະສັບ ກັບ ທ່ານ ແຟຣງ ວໍເຕີ ສະແຕນມາຍເອີ, ປະທານາທິບໍດີເຢຍລະມັນ ໃນໂອກາດຄົບຮອບ 50 ປີ ແຫ່ງການສ້າງສາຍພົວພັນການທູດ ຈີນ-ເຢຍລະມັນ. ທ່ານສີ ຈິ້ນຜິງ ກ່າວວ່າ ສອງປະເທດຈີນ-ເຢຍລະມັນ ຕ້ອງສືບຕໍ່ເຕົ້າໂຮມ ແລະ ເປີດກວ້າງຄວາມຮັບຮູ້ ຜ່ານການສົນທະນາ, ສືບຕໍ່ເພີ່ມເນື້ອໃນຂອງການພົວພັນຄູ່ຮ່ວມ. ຈີນສະໜັບສະໜູນສະຫະພາບເອີຣົບ ເປັນເຈົ້າຕົນເອງໃນດ້ານຍຸດທະສາດ, ຫວັງວ່າ ສະຫະພາບເອີຣົບຈະປະຕິບັດຕາມຫຼັກການຂັ້ນພື້ນຖານ ໃນຖານະທີ່ ຈີນ ກັບ ສະຫະພາບເອີຣົບ ເປັນຄູ່ຮ່ວມຍຸດທະສາດ, ຕ່າງຝ່າຍຕ່າງມີຜົນປະໂຫຍດ; ຫວັງວ່າ ເຢຍລະມັນ ຈະສືບຕໍ່ເສີມຂະຫຍາຍບົດບາດອັນຕັ້ງໜ້າ ພ້ອມກັບຈີນ ຊຸກຍູ້ການພົວພັນຈີນ-ສະຫະພາບເອີຣົບ ໃຫ້ຂະຫຍາຍຕົວຢ່າງໝັ້ນຄົງ ແລະ ຍາວນານ.

**3). ພັກກອມມູນິດກູບາ**

ວັນທີ 5/12/2022, ທ່ານ Miguel Díaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ພົບປະກັບ ທ່ານ ນາງ Mia Amor Mottley, ນາຍົກລັດຖະມົນຕີບາກບາດົດ (Barbados) ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດກູບາ-ກາຣິກອມ ຄັ້ງທີ VIII ທີ່ປະເທດບາກບາດົດ. ສອງຝ່າຍໄດ້ຢືນຢັນຄືນການເພີ່ມທະວີການຮັດແໜ້ນສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືທີ່ເປັນມູນເຊື້ອ ລະຫວ່າງສອງຊາດ ໂດຍສະເພາະໃນຂົງເຂດສາທາລະນະສຸກ, ກະສິກຳ, ວັດທະນະທຳ-ທ່ອງທ່ຽວ, ການສຶກສາ ແລະ ກິລາ. ທ່ານ Miguel Díaz-Canel ໄດ້ກ່າວວ່າກອງປະຊຸມສຸດຍອດກູບາ-ກາຣິກອມ ຄັ້ງນີ້ຈະປະສົບຜົນສຳເລັດຢ່າງຈົບງາມພາຍໃຕ້ຄວາມສາມັກຄີ ແລະ ຕັ້ງໜ້າຮ່ວມກັນ, ສືບຕໍ່ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອຄວາມຜາສຸກຂອງປະຊາຊົນ. ທ່ານ ນາງ Mia Amor Mottley ໄດ້ສະແດງຄວາມຊົມເຊີຍຕໍ່ການປະຕິບັດໜ້າທີ່ຂອງແພດໝໍກູບາ ໃນການຊ່ວຍເຫຼືອບັນດາປະເທດຕ່າງໆໃນພາກພື້ນ ແລະ ສາກົນ ໂດຍສະເພາະການຮັບມືກັບການແຜ່ລະບາດຂອງເຊື້ອພະຍາດ Covid-19. ພ້ອມນີ້, ສອງຝ່າຍໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືດ້ານເຕັກໂນໂລຊີທາງດ້ານຊີວະພາບ ແລະ ການຢາ.

ວັນທີ 10/12/2022, ທ່ານ Miguel Díaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຄຳນັບຂອງ ຄະນະຜູ້ແທນຈາກລັດຖະສະພາອາເມລິກາ ນຳໂດຍ ທ່ານ James McGovern, ປະທານຄະນະກຳມະການກົດໝາຍ ຂອງລັດຖະສະພາອາເມລິກາ. ສອງຝ່າຍໄດ້ຕີລາຄາຄືນການພົວພັນໃນໄລຍະຜ່ານມາ. ທ່ານ Miguel ໄດ້ກ່າວວ່າການຮ່ວມມືຂອງສອງຝ່າຍຄວນມີລັກສະນະສ້າງສັນ, ເຄົາລົບເຊິ່ງກັນ ແລະ ກັນໃຫ້ຫຼາຍຂຶ້ນ ແລະ ໄດ້ແຈ້ງໃຫ້ຊາບກ່ຽວກັບຜົນກະທົບຈາກການປິດ

ລ້ອມທາງດ້ານເສດຖະກິດຂອງອາເມຣິກາຕໍ່ກູບາ ໂດຍສະເພາະຕັ້ງແຕ່ສະໄໝລັດຖະບານຂອງປະທານາທິບໍດີ Donald Trump ເປັນຕົ້ນມາ.

**4). ພັກສັງຄົມນິຍົມເອກະພາບເວເນຊູເອລາ**

ວັນທີ 17 ທັນວາ 2022, ທ່ານ Nicolás Maduro, ປະທານພັກສັງຄົມນິຍົມເອກະພາບເວເນຊູເອລາ, ປະທານາທິບໍດີເວເນຊູເອລາ ໄດ້ພົບປະກັບຜູ້ນໍາພັກກໍາລັງເພື່ອນບ້ານ (Neighborhood Force), ຊຶ່ງເປັນພັກຝ່າຍຄ້ານຂອງເວເນຊູເອລາ (ທີ່ມີສະມາຊິກພັກ ເປັນເຈົ້າເມືອງ 10 ທ່ານ ແລະ ເຈົ້າແຂວງ 1 ທ່ານ). ທ່ານ Nicolás Maduro ກ່າວວ່າ ການພົບປະຄັ້ງນີ້ ເປັນບາດກ້າວໜຶ່ງທີ່ສໍາຄັນ ໃນການຮ່ວມກັນສ້າງລັດຖະບານແຫ່ງຊາດ ກັບ ຝ່າຍຄ້ານ ແລະ ຢໍ້າວ່າ ລັດຖະບານ ເປີດກວ້າງການເຈລະຈາກັບທຸກພັກການເມືອງ ເພື່ອຮ່ວມກັນພັດທະນາປະເທດຊາດ. ຊຶ່ງການພົບປະດັ່ງກ່າວ, ໄດ້ຮັບຟັງຂໍ້ສະເໜີຕ່າງໆ ຈາກພັກກໍາລັງເພື່ອນບ້ານ ກ່ຽວກັບ ບັນຫາການເມືອງ, ເສດຖະກິດ-ສັງຄົມ ຊຶ່ງລັດຖະບານຈະນໍາໄປພິຈາລະນາ ເພື່ອເຮັດວຽກຮ່ວມກັນໃນອະນາຄົດ.

ວັນທີ 17 ທັນວາ 2022, ກະຊວງການຕ່າງປະເທດເວເນຊູເອລາ ໄດ້ອອກຖະແຫຼງການປະນາມ ສ.ອາເມຣິກາ ພາຍຫຼັງ ລັດຖະສະພາ ສ.ອາເມຣິກາ ຮັບຮອງຮ່າງກົດໝາຍວ່າດ້ວຍ ການສືບຕໍ່ການຂວໍ້າບາດເວເນຊູເອລາ, ໂດຍວ່າ ເປັນການກະທໍາຝ່າຍດຽວ ຂອງນັກການເມືອງອາເມຣິກາ, ເປັນການລະເມີດອະທິປະໄຕຂອງເວເນຊູເອລາ ຢ່າງຮ້າຍແຮງ, ເປັນການປິດລ້ອມເສດຖະກິດ, ຫວັງມ້າງເພທໍາລາຍລະບອບການປົກຄອງຂອງເວເນຊູເອລາ ແນໃສ່ຈໍາກັດການພັດທະນາ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ການດໍາລົງຊີວິດຂອງປະຊາຊົນເວເນຊູເອລາ; ທັງຂັດກັບກົດໝາຍລະຫວ່າງປະເທດ.

**5). ການເລືອກຕັ້ງທົ່ວໄປໃນມາເລເຊຍ**

ພາຍຫຼັງເຈົ້າຊີວິດມາເລເຊຍ ໄດ້ຕົກລົງແຕ່ງຕັ້ງທ່ານ Anwar Ibrahim ເປັນນາຍົກລັດຖະມົນຕີຄົນໃໝ່ຂອງມາເລເຊຍ ວັນທີ 24/11/2022 ຜ່ານມາ. ວັນທີ 3/12/2022, ໄດ້ມີການປະກາດຄະນະລັດຖະບານຊຸດໃໝ່ມາເລເຊຍທັງໝົດ 28 ທ່ານ ນໍາໂດຍ ທ່ານ Anwar Ibrahim, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ 2 ທ່ານ ຄື: ທ່ານ Amad Zahid Hamidi, ພັກ Barisan Nasional (BN) ແລະ ທ່ານ Fadillah Yusof , ພັກ Gabungan Parti Sarawak (GPS); ທ່ານ Zambry Abd Kadir, ລັດຖະມົນຕີຕ່າງປະເທດ. ຄະນະລັດຖະບານຊຸດໃໝ່ນີ້ມີຈໍານວນໜ້ອຍກວ່າລັດຖະບານຊຸດຜ່ານມາ ທີ່ມີບໍ່ຕໍ່າກວ່າ 30 ທ່ານ. ພ້ອມດຽວກັນນີ້, ທ່ານ Anwar ໄດ້ຢໍ້າວ່າ ລັດຖະບານເອກະພາບຊຸດນີ້ຈະໃຫ້ຄວາມສໍາຄັນກັບການປົກຄອງ, ພັດທະນາເສດຖະກິດ ແລະ ແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນ.

**6). ການຈັດຕັ້ງລັດຖະບານ ໃນດານມາກ**

ວັນທີ 15 ທັນວາ 2022, ທ່ານ ນາງ Matt Frederiksen, ຫົວໜ້າພັກສັງຄົມປະຊາທິປະໄຕ, ຮັກສາການນາຍົກລັດຖະມົນຕີດານມາກ ໄດ້ປະກາດຂໍ້ຕົກລົງຈັດຕັ້ງລັດຖະບານດານມາກ ພາຍຫຼັງມີການເຈລະຈາເປັນເວລາ 06 ອາທິດ ນັບແຕ່ປະກາດຜົນການເລືອກຕັ້ງທົ່ວໄປກ່ອນກໍານົດ ໃນວັນທີ 1 ພະຈິກ 2022. ລັດຖະບານປະສົມຊຸດໃໝ່ຂອງດານມາກ ປະກອບດ້ວຍ 03 ພັກການເມືອງ ຄື: ພັກສັງຄົມປະຊາທິປະໄຕ (Social democrat), ພັກເສລີນິຍົມ (Ventre) ແລະ ພັກເປັນກາງ (Moderates). ທັງສາມພັກລວມກັນໄດ້ 90 ບ່ອນນັ່ງ, ເຊິ່ງຕາມລັດຖະທໍາມະນູນດານມາກ ຕ້ອງມີບ່ອນນັ່ງເກີນ 90 ບ່ອນນັ່ງ ໃນ 179 ບ່ອນນັ່ງທັງໝົດໃນລັດຖະສະພາ ຈຶ່ງສາມາດຈັດຕັ້ງລັດຖະບານໄດ້. ສະນັ້ນ, ລັດຖະບານປະສົມຊຸດໃໝ່ຂອງດານມາກ ຖືວ່າເປັນລັດຖະບານສຽງສ່ວນໜ້ອຍ. ໃນນີ້, ທ່ານ ນາງ Frederiksen ສືບຕໍ່ເປັນນາຍົກລັດຖະມົນຕີ; ທ່ານ Lars Lokke Rasmussen, ຫົວໜ້າພັກເປັນກາງ, ອະດີດນາຍົກລັດຖະມົນຕີ ໄດ້ດໍາລົງຕໍາແໜ່ງລັດຖະມົນຕີກະຊວງຕ່າງປະເທດ; ສ່ວນ ທ່ານ Jakob Ellemann-Jensen, ຫົວໜ້າພັກເສລີນິຍົມ ເປັນຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງປ້ອງກັນປະເທດ. ລັດຖະບານຊຸດໃໝ່ຄັ້ງນີ້ ປະກອບດ້ວຍພັກການເມືອງທັງຝ່າຍຊ້າຍ ແລະ ຂວາ, ເປັນຄັ້ງປະຫວັດສາດໃນຮອບ 4 ທົດສະວັດ ນັບແຕ່ຊຸມປີ 1970 ເປັນຕົ້ນມາ.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ

ຂົງເຂດນີ້, ສະຖານະການໃນແຫຼມເກົາຫຼີ ຍັງສືບຕໍ່ມີຄວາມເຄັ່ງຕຶງ ໂດຍສະເພາະແມ່ນການຂົ່ມຂູ່ກັນໄປມາລະຫວ່າງ ສ. ເກົາຫຼີ, ອາເມລິກາ ແລະ ພັນທະມິດ ກັບ ສປປ ເກົາຫຼີ, ຊຶ່ງໃນວັນທີ 6/12/2022, ສປປ ເກົາຫຼີ ໄດ້ປະກາດພາວະສຸກເສີນ ເພື່ອຍົກລະດັບການປ້ອງກັນຕາມເຂດຊາຍແດນ ແລະ ໄດ້ຍິງປືນໃຫຍ່ ປະມານ 130 ລູກ ຕົກລົງໃສ່ເຂດແບ່ງລະຫວ່າງສອງເກົາຫຼີ (NLL) ຢູ່ເຂດທະເລເຫຼືອງ ເພື່ອຕອບໂຕ້ ສ.ເກົາຫຼີ ແລະ ອາເມຣິກາ ທີ່ໄດ້ທົດລອງລູກສອນໄຟໃນເຂດດັ່ງກ່າວ. ກ່ອນໜ້ານີ້, ອາເມຣິກາ, ສ.ເກົາຫຼີ ແລະ ຍີ່ປຸ່ນ ຍັງໄດ້ປະກາດຂຶ້ນບັນຊີດຳເຈົ້າໜ້າທີ່ລະດັບສູງ, ບຸກຄົນ ຈຳນວນ 8 ຄົນ ແລະ ສະຖາບັນ 7 ແຫ່ງ ທີ່ຖືກກ່າວຫາວ່າພົວພັນກັບໂຄງການພັດທະນາລູກສອນໄຟຂອງ ສປປ ເກົາຫຼີ.

ການເມືອງພາຍໃນຍີ່ປຸ່ນ, ພາຍຫຼັງລັດຖະບານຍີ່ປຸ່ນ ໄດ້ອະນຸມັດແຜນຍຸດທະສາດທາງທະຫານສະບັບໃໝ່ ໃນວັນທີ 16 ທັນວາ 2022 ຜ່ານມາ, ຊຶ່ງໜຶ່ງໃນແຜນດັ່ງກ່າວ ແມ່ນການເພີ່ມງົບປະມານທາງທະຫານ ຈາກ 1% ເປັນ 2% ຂອງ GDP ຫຼື ປະມານ 315 ຕື້ໂດລາສະຫະລັດ ໃນໄລຍະ 5 ປີຕໍ່ໜ້າ (ພາຍໃນປີ 2027); ຍຸດທະສາດດັ່ງກ່າວ, ຍັງອະນຸຍາດໃຫ້ຍີ່ປຸ່ນ ສາມາດຕອບໂຕ້ສັດຕູໄດ້ດ້ວຍວິທີຕ່າງໆ, ຈາກແຕ່ກ່ອນ ທີ່ສາມາດປ້ອງກັນຕົນເອງໄດ້ ເທົ່ານັ້ນ. ເຮັດໃຫ້ປະຊາຊົນຫຼາຍຮ້ອຍຄົນ ຊຸມນຸມປະທ້ວງແຜນດັ່ງກ່າວ ແລະວ່າ ເປັນການຂັດກັບລັດຖະທຳມະນູນຂອງຍີ່ປຸ່ນ. ສື່ມວນຊົນ ຂອງຍີ່ປຸ່ນ ໄດ້ສະແດງຄວາມຄິດເຫັນວ່າ: ການປະກາດເພີ່ມສັກກະຍາພາບທາງທະຫານດັ່ງກ່າວ ຍິ່ງຈະເຮັດໃຫ້ສະຖານະການໃນພາກພື້ນເກີດຄວາມເຄັ່ງຕຶງຫຼາຍຂຶ້ນ. ຂະນະທີ່, ສະມາຊິກສະພາສູງຂອງຍີ່ປຸ່ນ ໄດ້ກ່າວວ່າ ຖ້າຍີ່ປຸ່ນ ຕ້ອງການຮັບປະກັນດ້ານຄວາມໝັ້ນຄົງຂອງຕົນ, ຍີ່ປຸ່ນ ຕ້ອງຫຼີກລ່ຽງການສະແດງໃດໆ ທີ່ເປັນເຫດໃຫ້ເກີດຄວາມຂັດແຍ່ງ, ຕ້ອງພະຍາຍາມເຈລະຈາທາງການທູດເທົ່ານັ້ນ.

### 2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ

ຄວາມຂັດແຍ່ງລະຫວ່າງອູແກຣນ ແລະ ລັດເຊຍ ສືບຕໍ່ເຄັ່ງຕຶງ ຂະຫຍາຍເປັນວົງກວ້າງ, ຊຶ່ງ ໃນເດືອນທັນວາ 2022, ຍັງມີການຕໍ່ສູ້ກັນລະຫວ່າງສອງຝ່າຍ ຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນໃນເຂດຕາເວັນອອກຂອງອູແກຣນ ໃນແຄວ້ນ Donetsk ທີ່ເປັນຈຸດຍຸດທະສາດສຳຄັນ. ໃນນັ້ນ, ລັດເຊຍ ໄດ້ໂຈມຕີການຂົນສົ່ງທະຫານ ແລະ ອາວຸດທີ່ຕາເວັນຕົກຊ່ວຍເຫຼືອ ລວມທັງຍຸດໂທປະກອນຂອງ ອູແກຣນ ທີ່ສົ່ງໄປແນວໜ້າຜ່ານທາງລົດໄຟເຮັດໃຫ້ ອູແກຣນຂາດແຄນພະລັງງານ ແລະ ເກີດໄຟຟ້າດັບໃນຫຼາຍຂົງເຂດໂດຍສະເພາະນະຄອນຫຼວງກຽບ, ເມືອງ Sumy, Cherkasy, Kharkhov, Krivoy Rog, Kirovograd, Nikolaev ແລະ Zhitomir. ຂະນະດຽວກັນ, ອູແກຣນ ກໍໂຈມຕີດ້ວຍໂດຣນໃສ່ສະໜາມບິນຂອງລັດເຊຍຢູ່ Saratov ແລະ Ryazan ຊຶ່ງຫ່າງຈາກອູແກຣນເຂົ້າໄປໃນລັດເຊຍ 500 ກິໂລແມັດ ເຮັດໃຫ້ທະຫານລັດເຊຍ ເສຍຊີວິດ 3 ຄົນ ແລະ ບາດເຈັບ 4 ຄົນ. ກະຊວງປ້ອງກັນປະເທດອາເມຣິກາ ກ່າວວ່າ ບໍ່ໄດ້ສະໜັບສະໜູນອູແກຣນ ໃນການໂຈມຕີດັ່ງກ່າວ, ແຕ່ໂດຍລວມ ອາເມຣິກາ ໃຫ້ການຊ່ວຍເຫຼືອທຸກຢ່າງແກ່ອູແກຣນ.

ອາເມລິກາ ແລະ ຕາເວັນຕົກ ຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ, ຊຶ່ງໃນວັນທີ 5/12/2022, ກອງປະຊຸມສະພາການຄ້າ ແລະ ເຕັກໂນໂລຊີ ຂອງອາເມລິກາ-ເອີຣົບ ທີ່ຈັດຂຶ້ນຢູ່ນະຄອນຫຼວງວໍຊິງຕັນດີຊີ ຂອງອາເມລິກາ ໄດ້ຕົກລົງອອກມາດຕະການລົງໂທດຕໍ່ລັດເຊຍ ເປັນຮອບທີ 9 ໃນນັ້ນ ແມ່ນກຳນົດເພດານລາຄາການຊື້ນ້ຳມັນຈາກລັດເຊຍ 60 ໂດລາສະຫະລັດ/ບາເຣວ. ນອກຈາກນັ້ນ, ອາເມລິກາ ຍັງເພີ່ມການຊ່ວຍເຫຼືອທາງການທະຫານໃຫ້ອູແກຣນໃນວັນທີ 10/12/2022 ຊຶ່ງລວມມີ ລູກສອນໄຟ HIMARS, ລູກປືນໃຫຍ່ 80,000 ລູກ. ພ້ອມດຽວກັນ, ກໍກຳລັງສະຫຼຸບແຜນການທີ່ຈະສະໜອງລະບົບລູກສອນໄຟປ້ອງກັນທາງອາກາດ MIM-104 Patriot ໃຫ້ອູແກຣນ.

ວັນທີ 19 ທັນວາ 2022, ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ໄດ້ຢ້ຽມຢາມ ສ.ເບລາຣຸດຊີ ແລະພົບປະກັບ ທ່ານ ອາເລັກຊານເດີ ລູກາເຊັນໂກ, ປະທານາທິບໍດີເບລາຣຸດຊີ ເພື່ອປຶກສາຫາລື ກ່ຽວກັບການຮ່ວມມືຮອບດ້ານຂອງສອງຝ່າຍໃນດ້ານເສດຖະກິດ, ພະລັງງານ, ອຸດສາຫະກຳ, ວັດທະນະທຳ, ມະນຸດສະທຳ, ຄວາມໝັ້ນຄົງ ແລະ ວຽກງານປ້ອງກັນປະເທດ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ແນວຄິດແບບສ້າງສັນ. ໃນການພົບປະ, ທ່ານ ປູຕິນ ໄດ້ກ່າວວ່າ: "ລັດເຊຍ- ເບລາຣຸດຊີ ແມ່ນເພື່ອນມິດທີ່ໃກ້ຊິດທີ່ສຸດ ແລະ ເປັນຄູ່ຮ່ວມມືຍຸດທະສາດ, ຊຶ່ງກຳລັງລົງເລິກເຊື່ອມໂຍງດ້ານເສດຖະກິດຢ່າງບໍ່ຢຸດຢັ້ງ, ຮ່ວມກັນຕ້ານແຮງກົດດັນຈາກການຂວ້ຳບາດທີ່ບໍ່ຍຸຕິທຳຂອງຕາເວັນຕົກ ແລະ ປະສານສົມທົບກັນຮອບດ້ານ ເພື່ອຫຼຸດຜ່ອນຜົນກະທົບຈາກການຂວ້ຳບາດດັ່ງກ່າວ". ໃນ

ທ້າຍປີ 2022 ນີ້, ມູນຄ່າການຄ້າສອງຝ່າຍ ຈະສາມາດບັນລຸໄດ້ເຖິງ 40 ຕື້ໂດລາສະຫະລັດ, ຊຶ່ງ ລັດເຊຍ ແມ່ນເປັນປະເທດລົງທຶນດ້ານເສດຖະກິດອັນດັບໜຶ່ງ ຢູ່ ເບລາຣຸດຊີ ກວມເອົາຫຼາຍກວ່າ 4 ຕື້ໂດລາສະຫະລັດ. ນອກນີ້, ສອງຝ່າຍ ຍັງໄດ້ປຶກສາຫາລື ກ່ຽວກັບຂັ້ນຕອນການສ້າງສະຫະພັນທະລັດ ລະຫວ່າງ ລັດເຊຍ-ເບລາຣຸດຊີ ເພື່ອຮັບປະກັນດ້ານຄວາມໝັ້ນຄົງໄປຄຽງຄູ່ກັບການຮ່ວມມືດ້ານເສດຖະກິດ ພາຍໃຕ້ຂອດການຮ່ວມມືຂອງອົງການສົນທິສັນຍາດ້ານຄວາມປອດໄພ (the Collective Security Treaty Organization). ຊຶ່ງ ປັດຈຸບັນ, ລັດເຊຍ ແລະ ເບລາຣຸດຊີ ຮ່ວມກັນຊ້ອມຮົບ ໃນດິນແດນຂອງເບລາຣຸດຊີ ເພື່ອຮັບມື ກັບທຸກໄພຄຸກຄາມ.

ສ່ວນ ລັດເຊຍ ແລະ ສປ ຈີນ ໄດ້ຮ່ວມກັນຊ້ອມຮົບປະຈຳປີ ໃນລະຫວ່າງວັນທີ 21-27 ທັນວາ 2022 ເພື່ອຮັດແໜ້ນຄວາມສາມັກຄີ, ເພີ່ມຄວາມເຂັ້ມແຂງຂອງສອງປະເທດ, ຮັບປະກັນສັນຕິພາບ ແລະ ສະຖຽນລະພາບ ໃນພາກພື້ນອາຊີ-ປາຊີຟິກ. ການຊ້ອມຮົບດັ່ງກ່າວ, ປະກອບມີການຍິງຂີປະນາວຸດ, ລູກສອນໄຟພິໄສໃກ້, ປືນໃຫຍ່ ແລະ ອື່ນໆ, ຊຶ່ງລັດເຊຍ ໄດ້ສົ່ງເຮືອຮົບຈຳນວນ 04 ລຳ, ເຮືອລາດຕະເວນ ແລະ ເຮືອບິນອີກຈຳນວນໜຶ່ງເຂົ້າຮ່ວມ, ສ່ວນຈີນ ໄດ້ສົ່ງເຮືອຮົບ ຈຳນວນ 06 ລຳເຮືອບິນ ແລະ ຍົນເຮລິຄອບເຕີ ເຂົ້າຮ່ວມ.

ວັນທີ 21 ທັນວາ 2022, ທ່ານ ເຊເລັນຊະກີ້, ປະທານາທິບໍດີອູແກຣນ ໄດ້ເດີນທາງຢ້ຽມຢາມອາເມຣິກາ ແລະ ພົບປະກັບປະທານາທິບໍດີ ໂຈ ໄບເດັນ ເພື່ອປຶກສາ ແລະ ຂໍຄວາມຊ່ວຍເຫຼືອດ້ານອາວຸດຍຸດໂທປະກອນ, ການຝຶກອົບຮົມດ້ານການທະຫານ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳ ຈາກອາເມຣິກາ ເພີ່ມຕື່ມ,ໂດຍຫຼ້າສຸດ ລັດຖະສະພາອາເມລິກາ ໄດ້ອະນຸມັດງົບປະມານ 1800 ລ້ານໂດລາ ຊ່ວຍອູແກຣນ. ການຢ້ຽມຢາມອາເມລິກາ ຂອງປະທານາທິບໍດີອູແກຣນຄັ້ງນີ້ ສຳຄັນຕໍ່ອາເມລິກາ, ສະແດງໃຫ້ເຫັນວ່າ ອາເມລິກາ ເປັນຜູ້ສະໜັບສະໜູນ ສ້າງບັນຫາຄວາມເຄັ່ງຕຶງໃນອູແກຣນ 10 ເດືອນຜ່ານມາ ແລະ ຍັງຈະສືບຕໍ່ ເພື່ອອຳນາດຂອງອາເມລິກາ.

ສະຖານະການໂດຍລວມໃນອູແກຣນ ຍັງນ່າເປັນຫ່ວງ, ແຕ່ ຫຼ້າສຸດ ປະທານາທິບໍດີປູຕິນ ໄດ້ປະກາດພ້ອມຈະເຈລະຈາຢຸດຕິຄວາມຂັດແຍ່ງກັບອູແກຣນ ແລະວ່າ ຜ່ານມາ ແມ່ນອູແກຣນ ເປັນຜູ້ປະຕິເສດການເຈລະຈາມາໂດຍຕະຫຼອດ.

**3). ການດຳເນີນຄະດີ ຕໍ່ອະດີດປະທານາທິບໍດີອາເມລິກາ**

ໃນໄລຍະໃກ້ໆມານີ້, ທ່ານ ໂດໂນ ທຣຳ, ອະດີດປະທານາທິບໍດີອາເມຣິກາ ໄດ້ເລີ່ມມີການເຄື່ອນໄຫວ ເພື່ອຫາສຽງ ກະກຽມລົງສະໝັກຕຳແໜ່ງປະທານາທິບໍດີ ໃນປີ 2024, ແຕ່ກໍມີເຫດການ ທີ່ກະທົບຕໍ່ພາບພົດຂອງທ່ານ ໂດໂນ ທຣຳ, ຊຶ່ງ ໃນວັນທີ 17 ທັນວາ 2022, ສະພາສູງອາເມລິກາ ໄດ້ແຕ່ງຕັ້ງຄະນະກຳມະການພິເສດ ປະກອບດ້ວຍ 9 ທ່ານ ເພື່ອກວດສອບການບຸກລຸກສຳນັກງານສະພາສູງ ຄັ້ງວັນທີ 6 ມັງກອນ 2021 ຜ່ານມາ ແລະ ໄດ້ມີຄຳເຫັນເອກະພາບກັນວ່າ ຈະສະເໜີກະຊວງຍຸດຕິທຳອາເມຣິກາ ດຳເນີນຄະດີອາຍາ ກັບ ທ່ານ ໂດໂນ ທຣຳ ໃນ 4 ຂໍ້ຫາ ຄື: 1. ຍຸແຍ່ ແລະ ອຳນວຍຄວາມສະດວກໃຫ້ເກີດການບຸກລຸກສຳນັກງານດັ່ງກ່າວ; 2. ຂັດຂວາງການດຳເນີນການຂອງເຈົ້າໜ້າທີ່; 3. ສົມຮູ້ຮ່ວມຄິດໃນການສໍ້ໂກງ ອາເມຣິກາ; 4. ສົມຮູ້ຮ່ວມຄິດ ໃນການບິດເບືອນຂໍ້ມູນຄວາມຈິງ ທີ່ປະກາດວ່າມີການສໍ້ໂກງການເລືອກຕັ້ງທ້າຍປີ 2020 ຜ່ານມາ; ເປັນຄັ້ງທຳອິດໃນປະຫວັດສາດຂອງອາເມລິກາ ທີ່ອະດີດປະທານາທິບໍດີ ຈະຖືກດຳເນີນຄະດີອາຍາ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຄຕພ ຈັດປາຖະກະຖາເອກະສານສຳຄັນຂອງພັກ-ຂອງຊາດ




ວັນທີ 01 ທັນວາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດປາຖະກະຖາລະນຶກວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13/12/1920 – 13/12/2022) ແລະ ວັນສະຖາປະນາ ສປປ ລາວ ຄົບຮອບ 47 ປີ (02/12/1975 – 02/12/2022) ໃຫ້ກຽດປາຖະກະຖາເລົ່າມູນເຊື້ອໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະບໍລິຫານງານພັກ ແລະ ພະນັກງານຫຼັກແຫຼ່ງທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ທວນຄືນຊີວິດ ແລະ ການເຄື່ອນໄຫວປະຕິວັດ, ຜົນງານ ແລະ ຄຸນງາມຄວາມດີ ຂອງປະທານ ໄກສອນ ພົມວິຫານ; ຍົກໃຫ້ເຫັນມູນເຊື້ອອັນອົງອາດກ້າຫານ, ມີຄວາມປີຊາສາມາດ, ເປັນວິລະບູລຸດຂອງຊາດລາວ ເປັນນັກຮັກຊາດທີ່ດູດດື່ມ; ເປັນນັກການເມືອງທີ່ສະຫຼາດສ່ອງໃສ, ເປັນນັກແນວຄິດທິດສະດີທີ່ຍິ່ງໃຫຍ່, ເປັນນັກໂຄສະນາທີ່ຄ່ອງແຄ້ວ ແລະ ເປັນຜູ້ທີ່ເຮັດແທ້ທຳຈິງ, ເປັນຜູ້ທີ່ໄດ້ຄົ້ນຄວ້າກຳແໜ້ນທິດສະດີມາກ-ເລນິນ, ແນວຄິດໂຮ່ຈິມິນ ຢ່າງເລິກເຊິ່ງ, ກຳແໜ້ນສະພາບການພາຍໃນ ແລະ ສາກົນ ນຳພາການປະຕິວັດລາວປະກາດເອກະລາດຢ່າງສົມບູນ, ໄດ້ວາງແນວທາງການປ່ຽນແປງໃໝ່ຢ່າງມີຫຼັກການ, ແທດເໝາະກັບສະພາບການໃນແຕ່ລະໄລຍະໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເຊິ່ງລູກຫຼານຮຸ່ນໃໝ່ຈະຕ້ອງຕັ້ງໜ້າຮ່ຳຮຽນເອົາແບບຢ່າງອັນປະເສີດເລີດລ້ຳ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນວິທີເຮັດວຽກ ຂອງ ປະທານ ໄກສອນ ພົມວິຫານ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດຕໍ່ໄປ. ສະຫາຍ ທອງສະຫວັນ ພົມວິຫານ ຍັງໄດ້ຍົກໃຫ້ເຫັນເຖິງມູນເຊື້ອ ແລະ ຄວາມໝາຍສຳຄັນຂອງວັນຊາດ ທີ 2 ທັນວາ ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດ ຂອງຊາດລາວເຮົາ, ແມ່ນວັນທີ່ປະເທດລາວໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕເປັນຂອງຕົນເອງ ແລະ ຍັງໄດ້ຍົກໃຫ້ເຫັນເຖິງຜົນສຳເລັດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງພັກ ແລະ ລັດຖະບານ ຂອງ ສປປລາວ ຕະຫຼອດໄລຍະ 47 ປີ ທີ່ຜ່ານມາທີ່ໄດ້ມີການເຕີບໃຫຍ່ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານໂຊໂກລົບ ວາລາດີມີຣ ເລໂອນິດາວິຈ, ປະທານສະມາຄົມມິດຕະພາບ ຣັດເຊຍ-ລາວ



ວັນທີ 7 ທັນວາ 2022, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ໂຊໂກລົບ ວະລາດີມີຣ ເລໂອນິດາວິຈ (VLADIMIR LEONIDOVICH), ປະທານສະມາຄົມມິດຕະພາບ ຣັດເຊຍ-ລາວ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາເຂົ້າຮ່ວມພິທີເປີດອະນຸສາວະລີນັກບິນທະຫານອະດີດສະຫະພາບໂຊຫວຽດ ລະຫວ່າງ ວັນທີ 3-10 ທັນວາ 2022 ຢູ່ ສປປ ລາວ. ທ່ານ ທອງສະຫວັນ ພົມວິຫານ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ, ປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມ ຂອງ ສອງປະເທດ ແລະ ປະຊາຊົນສອງຊາດລາວ ແລະ ຣັດເຊຍໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວຂຶ້ນສູ່ລະດັບໃໝ່ຢ່າງບໍ່ຢຸດຢັ້ງ. ພ້ອມນີ້, ຍັງໄດ້ຊົມເຊີຍຕໍ່ການພົວພັນຮ່ວມມື ລະຫວ່າງ ສະມາຄົມມິດຕະພາບ ລາວ-ຣັດເຊຍ ແລະ ຣັດເຊຍ-ລາວ ທີ່ໄດ້ພົວພັນຮ່ວມມືກັນມາແຕ່ດົນນານ ແລະ ໄດ້ຮັບການເສີມຂະຫຍາຍໃນແຕ່ລະໄລຍະ, ສອງສະມາຄົມມິດຕະພາບໄດ້ມີການຮ່ວມມື, ແລກປ່ຽນຂໍ້ມູນຂ່າວສານ ແລະ ຈັດກິດຈະກຳຮ່ວມກັນໃນໂອກາດວັນສຳຄັນຕ່າງໆຂອງສອງປະເທດ.

ໃນໂອກາດດັ່ງກ່າວ, ທ່ານຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕາງໜ້າລັດຖະບານ ແຫ່ງ ສປປ ລາວ ປະດັບຫຼຽນໄຊມິດຕະພາບ ໃຫ້ແກ່ ທ່ານໂຊໂກລົບ ວະລາດີມີຣ ເລໂອນິດາວິຈ, ປະທານສະມາຄົມມິດຕະພາບ ຣັດເຊຍ-ລາວ ແລະ ຫຼຽນກາມິດຕະພາບ ໃຫ້ແກ່ ທ່ານ ກາຣິນນອບ ເຊີເກ ເວຍແຊສລາວເວີວິສ, ກຳມະການສະມາຄົມມິດຕະພາບ ຣັດເຊຍ-ລາວ, ຮອງຜູ້ອຳນວຍການບໍລິສັດ MK ເພື່ອສະແດງຄວາມຮູ້ບຸນຄຸນ ແລະ ຕອບແທນຜົນງານອັນພົ້ນເດັ່ນໃນການປະກອບສ່ວນ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສປປ ລາວ ແລະ ຣັດເຊຍ.

**3. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສ. ເກົາຫຼີ ປະຈໍາ ສປປ ລາວ**



ວັນທີ 14 ທັນວາ 2022, ທີ່ ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ຈອງ ຢອງ ຊູ (Jung Yung-soo), ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສາທາລະນະລັດ ເກົາຫຼີ ຄົນໃໝ່ ປະຈໍາ ສປປ ລາວ. ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍ ທ່ານເອກອັກຄະລັດຖະທູດ ທີ່ໄດ້ຖືກແຕ່ງຕັ້ງໃຫ້ມາດໍາລົງຕໍາແໜ່ງໃໝ່, ເຊື່ອໝັ້ນວ່າການມາປະຕິບັດໜ້າທີ່ຂອງ ທ່ານທູດ ຈະປະກອບສ່ວນອັນສໍາຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດ ສປປ ລາວ ແລະ ສ. ເກົາຫຼີ ໃຫ້ນັບມື້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

ທ່ານ ທອງສະຫວັນ ພົມວິຫານ ໄດ້ແຈ້ງສະພາບການພົ້ນເດັ່ນ ຂອງ ສປປ ລາວ ໃຫ້ທ່ານທູດຮັບຊາບ ແລະ ຕີລາຄາສູງຕໍ່ ສາຍພົວພັນມິດຕະພາບ ແລະ ການຮ່ວມມືສອງປະເທດ ຕະຫຼອດໄລຍະ 27 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດຜ່ານມາ, ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນ ສ. ເກົາຫຼີ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ ສປປ ລາວ ໃນການຈັດຕັ້ງປະຕິບັດໂຄງການຮ່ວມມື ສອງຝ່າຍ ເປັນຕົ້ນແມ່ນໂຄງການຮ່ວມມືດ້ານສາທາລະນະສຸກ, ການສຶກສາ, ການຄ້າ-ການລົງທຶນ ແລະ ອື່ນໆ, ເຊິ່ງເປັນການປະກອບ ສ່ວນອັນສໍາຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃນປັດຈຸບັນ; ຍິນດີຈະຮ່ວມກັບ ທ່ານເອກອັກຄະລັດຖະທູດ ສ. ເກົາຫຼີ ໃນການຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ສອງປະເທດ ກໍຄື ສະມາຄົມມິດຕະພາບລາວ-ສ.ເກົາຫຼີ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນຢ່າງບໍ່ຢຸດຢັ້ງ.

# III. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ

## 1. ອົງການຈັດຕັ້ງມະຫາຊົນ ຄຕພ ຈັດການບໍລິຈາກເລືອດ ໃນໂອກາດວັນສຳຄັນຂອງພັກ, ຂອງຊາດ




ວັນທີ 08 ທັນວາ 2022, ອົງການຈັດຕັ້ງແມ່ຍິງ, ກຳມະບານ ແລະ ຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ຮ່ວມກັບອົງການກາແດງແຫ່ງຊາດລາວ ໄດ້ຈັດກິດຈະກຳບໍລິຈາກເລືອດ ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ພາຍໃຕ້ຄຳຂວັນ "ເນື່ອງໃນໂອກາດຊົມເຊີຍ ວັນຊາດ ວັນທີ 2 ທັນວາ ຄົບຮອບ 47 ປີ, ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ ແລະ ວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ ອົງການຈັດຕັ້ງແມ່ຍິງ, ກຳມະບານ, ຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ຂໍເຊີນຊວນທຸກໆ ສະຫາຍ ຮ່ວມບໍລິຈາກເລືອດ BLOOD DONATION". ເປັນກຽດເຂົ້າຮ່ວມ ແລະ ເປີດກິດຈະກຳຄັ້ງນີ້ ມີ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ດຣ ຈັນທະລາ ສຸກສາຄອນ, ຫົວໜ້າສະຖາບັນເລືອດແຫ່ງຊາດ ແລະ ບັນດາອົງການຈັດຕັ້ງອ້ອມຂ້າງສູນກາງພັກ ພ້ອມດ້ວຍສະມາຊິກສະຫະພັນແມ່ຍິງ, ກຳມະບານ ແລະ ຊາວໜຸ່ມ, ພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມບັນດາຜູ້ເຂົ້າຮ່ວມບໍລິຈາກເລືອດຈາກບັນດາອົງການຈັດຕັ້ງອ້ອມຂ້າງສູນກາງພັກ ມີທັງໝົດ 200 ສະຫາຍ ເຂົ້າຮ່ວມ. ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ການຈັດກິດຈະກຳດັ່ງກ່າວຂອງ 3 ອົງການຈັດຕັ້ງມະຫາຊົນ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ຮ່ວມກັບ ອົງການກາແດງແຫ່ງຊາດລາວ ເພື່ອຊົມເຊີຍ ວັນທີ່ມີຄວາມໝາຍສຳຄັນດັ່ງກ່າວ; ເປັນການຊຸກຍູ້ວຽກງານມະນຸດສະທຳຂອງປະເທດເຮົາ ແລະ ຊ່ວຍເຫຼືອເພື່ອນມະນຸດນຳກັນ; ທັງເປັນການເຕົ້າໂຮມຄວາມສາມັກຄີ,ການຮ່ວມມື ແລະ ຄວາມເປັນມິດທີ່ດີ ຈາກບັນດາອົງການຂອງສູນກາງພັກ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ລວມທັງກະຊວງການຕ່າງປະເທດ ເພື່ອເຮັດໃຫ້ວຽກຊ່ວຍເຫຼືອສັງຄົມ ກໍຄືວຽກງານຂອງອົງການຈັດຕັ້ງມະຫາຊົນ ແລະ ການປະສານງານວຽກວິຊາສະເພາະໃຫ້ມີຜົນສຳເລັດຮ່ວມກັນ; ທັງເປັນການ ເຄື່ອນໄຫວ ເພື່ອໃຫ້ບັນລຸບັນດາຂໍ້ແຂ່ງຂັນຂອງທັງ 3 ອົງການຈັດຕັ້ງມະຫາຊົນ ເປັນ ຕົ້ນ ຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງ, ຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານ ແລະ ຂໍ້ແຂ່ງຂັນ 4 ບຸກ ຂອງຊາວໜຸ່ມ.

2. ຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຊາວໜຸ່ມຂອງບັນດາອົງການພັກອ້ອມຂ້າງ ຫ້ອງ 6 ຮ່ວມກັນຈັດກອງປະຊຸມແລກປ່ຽນບົດຮຽນ




ເພື່ອຂໍ່ານັບຊົມເຊີຍວັນຊາດ ທີ 2 ທັນວາ ຄົບຮອບ 47 ປີ ແລະ ວັນເກີດ ຂອງທ່ານ ປະທານໄກສອນ ພົມວິຫານ ຄົບຮອບ 102 ປີ, ທັງເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ ໃນປີ 2023. ໃນວັນທີ 07 ທັນວາ 2022, ຢູ່ທີ່ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ (ຫ້ອງ6), ຄະນະບໍລິຫານງານຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ຮ່ວມກັບຄະນະບໍລິຫານງານຊາວໜຸ່ມຂອງບັນດາອົງການພັກອ້ອມຂ້າງຫ້ອງ 6 ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນ ໃນຫົວຂໍ້ "ຍົກສູງບົດບາດການເປັນເສນາທິການໃຫ້ແກ່ຂັ້ນເທິງ" ແລະ ກອງປະຊຸມສາກົນຈໍາລອງ. ໃຫ້ກຽດເຂົ້າຮ່ວມເປັນປະທານໃນກອງປະຊຸມ ໂດຍສະຫາຍ ວາລະໄຊ ເລັ່ງສະຫວັດ, ກໍາມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີສະຫາຍຄະນະກໍາມະບວນການຂອງສູນກາງຊາວໜຸ່ມ, ບັນດາສະຫາຍເລຂາ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ແລະ ບັນດາຄະນະ ຂອງສູນກາງພັກ ຄື: ຫ້ອງວ່າການສູກນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະກວດກາສູນກາງພັກ ແລະ ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ບັນດາສະຫາຍຕາງໜ້າໜ່ວຍພັກ, ຕາງໜ້າອົງການຈັດຕັ້ງມະຫາຊົນຂອງ ຄຕພ ແລະ ສະມາຊິກຊາວໜຸ່ມ ຄຕພ ເຂົ້າຮ່ວມທັງໝົດຫຼາຍກວ່າ 100 ສະຫາຍ. ໃນວາລະທີ 1 ຂອງກອງປະຊຸມແລກປ່ຽນບົດຮຽນ, ຕາງໜ້າຊາວໜຸ່ມ ທັງ 6 ພາກສ່ວນ ໄດ້ຂຶ້ນແລກປ່ຽນບົດຮຽນກ່ຽວກັບການຍົກສູງບົດບາດເປັນເສນາທິການໃຫ້ແກ່ຂັ້ນເທິງ, ໂດຍສະເພາະແມ່ນວຽກງານຄົ້ນຄວ້າ ແລະ ການຂຽນ; ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ມີການປະກອບຄໍາຄິດຄໍາເຫັນ ແລະ ຕັ້ງຄໍາຖາມແລກປ່ຽນ ເຊິ່ງກັນ ແລະ ກັນ ແບບກົງໄປກົງມາ ຢ່າງເປັນຂະບວນຟົດຟື້ນ ແລະ ມີເນື້ອໃນອັນອຸດົມສົມບູນ. ໃນວາລະທີ 2 ແມ່ນການຈັດກອງປະຊຸມສາກົນຈໍາລອງ ພາຍໃຕ້ຫົວຂໍ້ຫຼັກ ຄື: ລະບຽບໂລກໃໝ່ ແລະ ການຫັນເປັນດີຈີຕ້ອນ, ໂດຍແຕ່ລະພາກສ່ວນ ໄດ້ຂຶ້ນກ່າວຄໍາເຫັນເປັນພາສາລາວ ແລະ ແປເປັນພາສາຕ່າງປະເທດ ຄື: ຫວຽດ, ອັງກິດ, ຈີນ ແລະ ລັດເຊຍ. ກອງປະຊຸມ ທັງ 2 ວາລະ ໄດ້ດໍາເນີນໄປດ້ວຍບັນຍາກາດອັນຟົດຟື້ນ ແລະ ໄດ້ຮັບຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້.

ໃນຕອນທ້າຍ, ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ມີຄໍາເຫັນຕໍ່ກອງປະຊຸມ, ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມຄິດລິເລີ່ມທີ່ດີ ໃນການຈັດກິດຈະກໍາ ທີ່ຕິດພັນກັບວິຊາສະເພາະ ເຊິ່ງເປັນກິດຈະກໍາທີ່ມີຄວາມສໍາຄັນ, ເຮັດໃຫ້ສະມາຊິກຊາວໜຸ່ມ ມີຄວາມກ້າຫານ, ໄດ້ພັດທະນາຄວາມຮູ້ດ້ານວິຊາການ ແລະ ຮັດແໜ້ນຄວາມສາມັກຄີລະຫວ່າງຊາວໜຸ່ມ ທັງ 6 ພາກສ່ວນ. ນອກນັ້ນ, ສະຫາຍ ຍັງໄດ້ຊີ້ນໍາໃຫ້ຊາວໜຸ່ມ ສືບຕໍ່ຈັດກິດຈະກໍາທີ່ຕິດພັນກັບວິຊາສະເພາະ ໃຫ້ຫຼາຍຂຶ້ນກວ່າເກົ່າ; ສະເໜີໃຫ້ຊາວໜຸ່ມ ທັງ 6 ພາກສ່ວນ ສືບຕໍ່ແລກປ່ຽນ ແລະ ປະສານສົມທົບນໍາກັນ, ຍົກສູງການເປັນເສນາທິການໃຫ້ແກ່ການນໍາ ໃຫ້ມີປະສິດທິຜົນສູງກວ່າເກົ່າ.

### 3. ຄະນະບໍລິຫານງານຊາວໜຸ່ມ ຄຕພ ຢ້ຽມຊົມຫໍພິພິທະພັນໄກສອນ ພົມວິຫານ



ວັນທີ 14 ທັນວາ 2022, ສະຫາຍ ຄຳເຟືອງ ພັນທະໄຊ, ເລຂາ ຄະນະຄະນະບໍລິຫານງານຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາສະມາຊິກຊາວໜຸ່ມ ເຂົ້າຢ້ຽມຊົມ ຫໍພິພິທະພັນ ໄກສອນ ພົມວິຫານ ເພື່ອລະນຶກວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ, ຊຶ່ງໄດ້ຮັບຟັງການເລົ່າປະຫວັດ, ຜົນງານການປະກອບສ່ວນໃນພາລະກິດປົດປ່ອຍປະເທດຊາດ, ຄຸນງາມຄວາມດີ, ຄວາມເປັນແບບຢ່າງນຳໜ້າທີ່ດີ ຂອງປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ແສນເຄົາລົບຮັກ ຂອງປວງຊົນລາວທັງຊາດ.